**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ໝໝໝ ★ ໙໙໙

ແຂວງອັດຕະປື

ເລກທີ. 5.22./ ຈຂ.ອປ

ອັດຕະປື, ວັນທີ 25 ພຶດສະພາ 2016

## ຄຳສັ່ງ

## ຂອງເຈົ້າແຂວງ

## ວ່າດ້ວຍການສະກັດກັ້ນ, ການຂຸດຄົ້ນ, ການເຄື່ອນຍ້າຍ ຊື້-ຂາຍ ຫີນອ່ອນປາໂກໄດຢູ່ເຂດ ພູກາງໂຮງ ເມືອງພູວົງ ແຂວງອັດຕະປື

**ເຖິງ:**
- ເຈົ້າເມືອງ 5 ຕົວເມືອງ
- ກອງບັນຊາການ ທະຫານແຂວງ.
- ກອງບັນຊາການ ປ້ອງກັນຄວາມສະຫງົບແຂວງ.
- ພະແນກການອ້ອມຂ້າງແຂວງ.
- ບໍລິສັດ ພັດທະນາຫີນປະເສີດ ລາວ-ຈີນ ຈຳກັດ.

- ອີງຕາມ: ກົດໝາຍການປົກຄອງທ້ອງຖິ່ນແຫ່ງ ສປປ ລາວ ສະບັບເລກທີ 03/ສພຊ, ລົງວັນທີ 21 ຕຸລາ 2003, ໝວດທີ III, ມາດຕາ 14 ວ່າດ້ວຍສິດ ແລະ ໜ້າທີ່ຂອງເຈົ້າແຂວງ.
- ອີງຕາມ: ສັນຍາວ່າດ້ວຍການສຳຫຼວດ, ຂຸດຄົ້ນ ແລະ ປຸງແຕ່ງຫີນອ່ອນປາໂກໄດຢູ່ເຂດ ພູກາງໂຮງ ເມືອງພູວົງ ແຂວງອັດຕະປື ສປປ ລາວ ກັບບໍລິສັດ ພັດທະນາຫີນປະເສີດ ລາວ-ຈີນ ຈຳກັດ ທີ່ນະຄອນຫຼວງວຽງຈັນ, ລົງວັນທີ 24 ກຸມພາ 2016.

ໄລຍະຜ່ານມາສັງເກດເຫັນວ່າມີພວກສວຍໂອກາດເຂົ້າລັກລອບຂຸດຄົ້ນ ແລະ ຊື້-ຂາຍຫີນອ່ອນປາໂກໄດຢູ່ພູກາງໂຮງເປັນຈຳນວນຫຼວງຫຼາຍພໍສົມຄວນ, ຊຶ່ງລັດຖະບານ ກໍ່ຄືອຳນາດການປົກຄອງແຂວງກໍ່ໄດ້ໃຫ້ການສຶກສາອົບຮົມແກ່ປະຊາຊົນ, ທັງສະກັດກັ້ນຫ້າມການຂຸດຄົ້ນ, ການເຄື່ອນຍ້າຍ ຊື້-ຂາຍ ຫີນອ່ອນປາໂກໄດດັ່ງກ່າວ. ຍ້ອນແນວນັ້ນ ເພື່ອຮັບປະກັນໃຫ້ແກ່ການເຄື່ອນໄຫວດຳເນີນທຸລະກິດຂອງບໍລິສັດ ພັດທະນາຫີນປະເສີດ ລາວ-ຈີນ ຈຳກັດ ທີ່ໄດ້ສ້າງຕັ້ງຂຶ້ນຢ່າງຖືກຕ້ອງຕາມກົດໝາຍ ແລະ ເຊັນສັນຍາກັບລັດຖະບານແລ້ວນັ້ນ ໃຫ້ໄດ້ເຄື່ອນໄຫວຢ່າງມີປະສິດທິຜົນ, ຕອບສະໜອງໄດ້ຕາມຈຸດປະສົງ ແລະ ເປົ້າໝາຍທີ່ສັນຍາໄດ້ກຳນົດໄວ້ ຊຶ່ງໄດ້ສ້າງຜົນປະໂຫຍດໃຫ້ແກ່ປະເທດຊາດ ແລະ ປະກອບສ່ວນພັດທະນາທ້ອງຖິ່ນແຂວງອັດຕະປືພວກເຮົາ.

## ເຈົ້າແຂວງອອກຄຳສັ່ງ ດັ່ງນີ້:

1. ລັດຖະບານແຫ່ງ ສປປ ລາວ ແລະ ບໍລິສັດ ພັດທະນາຫີນປະເສີດ ລາວ-ຈີນ ຈຳກັດ ໄດ້ເຊັນສັນຍາວ່າດ້ວຍການສຳຫຼວດ, ຂຸດຄົ້ນ ແລະ ປຸງແຕ່ງຫີນອ່ອນປາໂກໄດ ຢູ່ເຂດພູກາງໂຮງ ເມືອງພູວົງ ແຂວງ ອັດຕະປື ໃນວັນທີ 24 ກຸມພາ 2016 ຢ່າງເປັນທາງການແລ້ວ.

. ຫ້າມບໍ່ໃຫ້ບຸກຄົນ, ນິຕິບຸກຄົນ, ພໍ່ຄ້າ-ຊາວຂາຍ, ນັກທຸລະກິດ ທັງພາຍໃນ ແລະ ຕ່າງປະເທດທີ່ບໍ່ໄດ້ຮັບອະນຸຍາດຈາກລັດຖະບານເຂົ້າມາປຸກລະດົມຊຸກຍູ້ປະຊາຊົນຂຶ້ນໄປລັກລອບຂຸດຄົ້ນຫີນອ່ອນປາໂກໄດ ຢູ່ເຂດສຳປະທານພູກາງໂຮງ ແລະ ເຂດຫ້ວຍນ້ຳລຳເຊ ຫຼື ພື້ນທີ່ອື່ນໆ ເພື່ອເຮັດການຂຸດຄົ້ນ, ການເຄື່ອນຍ້າຍ ຊື້-ຂາຍ ຫີນອ່ອນປາໂກໄດຢູ່ແຂວງ ອັດຕະປືຢ່າງເດັດຂາດ.

3. ໃຫ້ດຳເນີນການສະກັດກັ້ນ ແລະ ປາບປາມທຸກຂະບວນການທີ່ຊຸກຍູ້ປະຊາຊົນຂຶ້ນໄປລັກລອບ ຫີນອ່ອນປາໂກໄດ ຢູ່ໃນເຂດສຳປະທານ ພູກາງໂຮງນັ້ນ ໃຫ້ຢຸດຕິຢ່າງສິ້ນເຊີງ; ຖ້າມີບຸກຄົນ ຫຼື ນິຕິບຸກຄົນໃດທີ່ລະເມີດແມ່ນໃຫ້ດຳເນີນການຕາມລະບຽບກົດໝາຍແຫ່ງ ສປປ ລາວ ຢ່າງເດັດຂາດ.

4. ມອບໃຫ້ອຳນາດການປົກຄອງ ແລະ ການຈັດຕັ້ງຂອງລັດທຸກຂັ້ນ ໃຫ້ການແນະນຳ, ອະທິບາຍໃຫ້ພະນັກງານ, ທະຫານ, ຕຳຫຼວດ ແລະ ປະຊາຊົນຮັບຮູ້ຢ່າງທົ່ວເຖິງ, ບໍ່ອະນຸຍາດໃຫ້ມີຄົນພາຍໃນ ແລະ ຕ່າງປະເທດທີ່ມາເຄື່ອນໄຫວບໍ່ຖືກຕ້ອງຕາມລະບຽບກົດໝາຍພັກເຊົາຢູ່ເຮືອນປະຊາຊົນ; ພ້ອມກັນນັ້ນ ກໍ່ບໍ່ໃຫ້ອະນຸຍາດບຸກຄົນ ຫຼື ນິຕິບຸກຄົນເປັນນາຍແປພາສາໃຫ້ກຸ່ມຄົນດັ່ງກ່າວ. ຖ້າໃຜເຮັດກໍ່ຈະຖືວ່າເປັນຄວາມຜິດກົດໝາຍເຊັ່ນດຽວກັນ.

5. ມອບໃຫ້ເຈົ້າເມືອງ, ປກຊ, ປກສ, ອົງການຈັດຕັ້ງມະຫາຊົນ, ຫ້ອງການໂຄສະນາອົບຮົມ ແລະ ຂະແໜງການທີ່ກ່ຽວຂ້ອງຈັດຕັ້ງຜັນຂະຫຍາຍຄຳສັ່ງສະບັບນີ້ໃຫ້ໄດ້ຮັບຜົນດີ; ໃຫ້ມີການປຶກສາຫາລື ແລະ ມອບໝາຍຄວາມຮັບຜິດຊອບກັນຢ່າງຈະແຈ້ງ, ພ້ອມທັງລາຍງານສະພາບການເຄື່ອນໄຫວໃຫ້ເຈົ້າແຂວງ ແລະ ເຈົ້າເມືອງ ຮັບຊາບເປັນປົກກະຕິ ແລະ ຕໍ່ເນື່ອງ ເພື່ອແກ້ໄຂບັນຫາຢ່າງທັນການ.

ຖ້າຫາກຂໍ້ຕົກລົງ ແລະ ຄຳສັ່ງໃດໃນເມື່ອກ່ອນ ທີ່ຂັດກັບເນື້ອໃນຂອງຄຳສັ່ງສະບັບນີ້ ລ້ວນແຕ່ຖືກຍົກເລີກ, ຄຳສັ່ງສະບັບນີ້ ມີຜົນສັກສິດ ແລະ ນຳໃຊ້ໄດ້ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ເຈົ້າແຂວງ**

ແຂວງອັດຕະປື
ເຈົ້າແຂວງ ແຂວງອັດຕະປື

ດຣ.ນາມ ວິຍະເກດ